ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ



ສຳນັກງານໃຫຍ່

ເລກທີ: 040 /ທຄຕລ 2021

ນະຄອນຫຼວງວຽງຈັນ, ວັນທີ: 22 MAR 2021

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ, ຫ້າງຮ້ານຕົວແທນຈຳໜ່າຍ ສິ້ນ ຢູ່ໃນນະຄອນຫລວງວຽງຈັນ.

**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມຍື່ນຊອງໃບປະເມີນລາຄາສິ້ນ (ສິ້ນຈຸດ+ສິ້ນຂັ້ນ) ປະຈຳປີ 2022.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນທີ່ມີຄວາມສົນໃຈຍື່ນຊອງປະເມີນລາຄາ ສິ້ນ (ສິ້ນຈຸດ+ສິ້ນຂັ້ນ) ປະຈຳປີ 2022 ທຄຕລ ກຳນົດສົ່ງໃຫ້, ການຍື່ນຊອງປະເມີນລາຄາຕ້ອງປະກອບເອກະສານຕາມເງື່ອນໄຂດັ່ງລຸ່ມນີ້ :

| ລ/ດ | ລາຍການ | ເງື່ອນໄຂກ່ຽວກັບສິ້ນ | ຈຳນວນ |
|---|---|---|---|
| 1 | **ສິ້ນຈຸດດຳ** | – ຕ້ອງເປັນສິ້ນໄໝຫຼາບເບີ 1 ທັງຜືນສິ້ນ ແລະ ຕີນສິ້ນ.<br>– ການຕ່ຳຜືນສິ້ນ ແມ່ນໃຊ້ໄໝຫຼາບເບີ 1 ຕ່ຳ 3 ເສັ້ນ ແລະ ຕີນສິ້ນໃຊ້ໄໝຫຼາບລ່ອງເບີ 1, ຕ່ຳ 6 ເສັ້ນ.<br>– ຕ້ອງໃຊ້ໄໝຄຳເບີ 1 ແລະ ໄໝຄຳສີທອງ ເບີ 1 ໃນການເກາະ ຫຼື ຊັດ ( ລວມທັງຕີນສິ້ນ ແລະ ຜືນ ).<br>– ຕີນສິ້ນຕ້ອງເປັນຟືມ 10 ລົບ ຄວາມກ້ວາງ 19 ຊມ.<br>– ຜືນສິ້ນຕ້ອງກ້ວາງ 180 ຊມ. | 800 ຜືນ |
| 2 | **ສິ້ນຂັ້ນ** | – ຕ້ອງເປັນສິ້ນໄໝຫຼາບເບີ 1 ທັງຜືນ ແລະ ຕີນສິ້ນ.<br>– ການຕຳຜືນສິ້ນ ແມ່ນໃຊ້ໄໝຫຼາບເບີ 1 ຕ່ຳ 3 ເສັ້ນ.<br>– ຕີນສິ້ນໃຊ້ໄໝຫຼາບເບີ 1, ລ່ອງ 6 ເສັ້ນ.<br>– ໃຊ້ໄໝຄຳເບີ 12 ແລະ ໄໝຄຳທອງເບີ 3 ໃນການເກາະ ແລະ ຊັດ ( ລວມທັງຜືນສິ້ນ ແລະ ຕີນເສັ້ນ ).<br>– ຕີນສິ້ນຕ້ອງເປັນຟືມ 10 ລົບ ຄວາມກ້ວາງ 19 ຊມ.<br>– ຜືນສິ້ນຕ້ອງກ້ວາງ 180 ຊມ. | 800 ຜືນ |

1. **ເງື່ອນໄຂຂອງບໍລິສັດ, ຫ້າງຮ້ານຜູ້ສະໜອງທີ່ຈະຍື່ນຊອງປະມູນຕ້ອງປະກອບມີລາຍການດັ່ງນີ້:**

- **<u>ຊອງທີ່1 (ບໍ່ປິດຊອງ):</u>** ໃບທະບຽນວິສາຫະກິດ, ໃບຢັ້ງຢືນການມອບພັນທະອາກອນ ປີ 2019, ໃບຢັ້ງຢືນເປັນຕົວແທນຈຳໜ່າຍ (ຖ້າມີ). **ກຳນົດການຍື່ນຊອງກ່ອນ 14:00 ໂມງ ຂອງ ວັນທີ 22/04/2021** ໃນໂມງລັດຖະການທີ່ ພະແນກຫ້ອງການບໍລິຫານ-ການເງິນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C ແລະ **ຄັດຕິດສິ້ນຕົວຢ່າງທີ່ຈະເຂົ້າຮ່ວມປະມູນມາພ້ອມ.**
- **<u>ຊອງທີ່2 (ປິດຊອງ):</u>**

- ສະເໜີລາຄາເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ10% .
- ໃນວັນທີ **29/04/2021 ເວລາ 09:30** ໂມງ ແມ່ນມື້ເປີດຊອງປະມູນແຈ້ງໃຫ້ຫ້າງຮ້ານຜູ້ສະໜອງ ແລະ ຜູ້ທີ່ມີຄວາມສົນໃຈຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.
- ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 29/05/2021)** ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

- **<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.
- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**
  - ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນການປະມູນ (ຕາມຂໍ້ 4).
  - ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

2. **ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- **ງວດທີ 1:** ຊຳລະ 15% ຂອງມູນຄ່າ ພາຍຫລັງເຊັນສັນຍາ ແລະ ຈົດທະບຽນສານ ສຳເລັດ.
- **ງວດທີ 2:** ຊຳລະ 85% ຂອງມູນຄ່າ ພາຍຫລັງໄດ້ຮັບສິນຄ້າຄົບຖ້ວນຖືກຕ້ອງຕາມຈຳນວນ ແລະ ໄດ້ຮັບການຢັ້ງຢືນຈາກ ຄະນະກຳມະການ ຂອງ ທຄຕລ ຢ່າງເປັນລາຍລັກອັກສອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຢື່ນຊອງປະມູນໃນຄັ້ງນີ້.

**ປະທານຄະນະກຳມະການປະມູນ**

ບັນທະລາດ ແກ້ວປະເສີດ

ຕິດຕໍ່ພົວພັນ: ຂະແໜງສະໜອງວັດຖຸເຕັກນິກ 021 213200 ຕໍ່ 414
ຫຼື ນາງ ຈັນມາລີ ພົມວົງສາ ໂທ 020 55888 8876 , ນາງ ວັນມີນາ ລໍຄຳຈັນ ໂທ 020 5933 3349.

- bidcommittee@bcel.com.la

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ...................... (ຍື່ນຊອງສະເປັກບໍ່ເກີນ ວັນທີ ........................)

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ໃບອະນຸຍາດເປັນຕົວແທນ | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນລັດຖະການ) | |
| 1 | ບ/ສ......... | (999/ 02.01.2015) | 2019 | .... ປີ | (ໃຫ້ລະບຸ) | (ໃຫ້ລະບຸ) | (ໃຫ້ລະບຸລະອຽດ) | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ....................................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານ:

ຊື່:

ໂທ: